ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ

ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ

ເລກທີ 2147 /ກພຫຼ

ນະຄອນຫຼວງວຽງຈັນ, ວັນທີ 02 SEP 2026

# ປະກາດຮັບສະໝັກພະນັກງານພັດທະນາຊຸມຊົນ

ລັດຖະບານ ສປປ ລາວ ໄດ້ເຊັນສັນຍາກັບທະນາຄານພັດທະນາອາຊີ ເພື່ອດຳເນີນໂຄງການສ້າງຄວາມເຂັ້ມແຂງດ້ານການປັບຕົວ ແລະ ຫຼຸດຜ່ອນຄວາມທຸກຍາກໃນເຂດຊົນນະບົດ (ສຫຼຊ) ພາຍໃຕ້ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ໄລຍະໂຄງການແຕ່ປີ 2025–2030 ເປັນວຽກງານລິເລີ່ມທີ່ສຳຄັນຂອງລັດຖະບານແຫ່ງ ສປປ ລາວ, ທີ່ໄດ້ຮ່ວມມືກັບທະນາຄານພັດທະນາອາຊີ, ເພື່ອແນໃສ່ ການສ້າງຄວາມໝັ້ນຄົງດ້ານສະບຽງອາຫານ, ແກ້ໄຂຄວາມທຸກຍາກ ແລະ ຄວາມທ້າທາຍຂອງ ຜູ້ຂາດສານອາຫານ ໃນຂະນະທີ່ເພີ່ມຄວາມທົນທານຕໍ່ສະພາບອາກາດໃນເຂດຊຸມຊົນ. ໂຄງການດັ່ງກ່າວ ແມ່ນໂຄງການໃຫ້ເງິນອຸດໜູນແບບມີເງື່ອນໄຂ ແລະ ແນໃສ່ແມ່ຍິງຖືພາທີ່ທຸກຍາກ ແລະ ແມ່ທີ່ມີເດັກນ້ອຍຕໍ່າກວ່າ 2 ປີ, ຈະໄດ້ຮັບໂພຊະນາການທີ່ພຽງພໍແມ່ນມີຄວາມສຳຄັນຫຼາຍໃນໄລຍະ 1,000 ວັນທຳອິດຂອງຊີວິດຂອງເດັກ. ໂຄງການດັ່ງກ່າວໄດ້ຈັດຕັ້ງປະຕິບັດຢູ່ 16 ເມືອງໃນ 4 ແຂວງຄື: ແຂວງ ໄຊຍະບູລີ (ເມືອງ ໄຊຍະບູລີ, ໄຊສະຖານ ແລະ ຊຽງຮ່ອນ), ແຂວງ ຫຼວງພະບາງ (ເມືອງ ພູຄູນ, ຈອມເພັດ, ໂພນທອງ, ວຽງຄຳ ແລະ ໂພນໄຊ), ແຂວງ ຄຳມ່ວນ (ເມືອງ ນາກາຍ, ມະຫາໄຊ, ບົວລະພາ ແລະ ໄຊບົວທອງ) ແລະ ແຂວງ ສະຫວັນນະເຂດ (ເມືອງ ພີນ, ຊົນນະບູລີ, ພະລານໄຊ ແລະ ອາດສະພອນ).

ໂຄງການ ສຫຼຊ ມີຄວາມຕ້ອງການຮັບສະໝັກພະນັກງານໂຄງການ ຕຳແໜ່ງ ພະນັກງານພັດທະນາຊຸມຊົນ ເພື່ອມາປະຈຳຢູ່ ເມືອງ ພູຄູນ, ເມືອງ ຈອມເພັດ, ເມືອງ ອາດສະພອນ ແລະ ເມືອງ ພີນ. ຜູ້ສະໝັກຄວນມີຄຸນນະວຸດທິດັ່ງລຸ່ມນີ້:

- ຈົບຊັ້ນສູງ ຫຼື ປະລິນຍາຕີ ສາຂາວິທະຍາສາດສັງຄົມ, ເສດຖະສາດ, ພັດທະນາຊົນນະບົດ, ກະສິກຳ, ລ້ຽງສັດ, ປ່າໄມ້, ພັດທະນາຊຸມຊົນ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;
- ມີປະສົບການເຮັດວຽກໂດຍກົງກັບ ຊຸມຊົນ ຈະເປັນຂໍ້ດີເພື່ອການພິຈາລະນາ ເຊັ່ນ: ເຄີຍລົງປະຕິບັດວຽກງານພາກສະໜາມ, ເຄີຍຈັດການຝຶກອົບຮົມ ຫຼື ສ້າງຄວາມຮັບຮູ້, ການບໍລິຫານຈັດການ ແກ້ໄຂບັນຫາ, ລວມເຖິງໃນສະພາບຂອງວຽກງານ ການຫຼຸດຜ່ອນຄວາມທຸກຍາກ, ການປົກປ້ອງສັງຄົມ, ການຮ່ວມມືດ້ານເສດຖະກິດ, ການພັດທະນາຊີວິດການເປັນຢູ່, ແລະ/ຫຼື ການສ້າງຄວາມເຂັ້ມແຂງຂອງບົດບາດແມ່ຍິງ.
- ສາມາດເວົ້າພາສາທ້ອງຖິ່ນ ແລະ ເຂົ້າໃຈສະພາບສັງຄົມ ແລະ ວັດທະນະທຳຂອງຊົນເຜົ່າທ້ອງຖິ່ນທີ່ເຮັດວຽກນຳ;
- ມີທັກສະການສື່ສານ ບໍ່ວ່າຈະເປັນການຂີດຂຽນ ແລະ ການເວົ້າພາສາລາວໄດ້ດີ;
- ຕ້ອງມີຄວາມສົນໃຈໃນການເຮັດວຽກກັບຊຸມຊົນ ເພື່ອການຍົກລະດັບໜ້າວຽກຂອງຕົນ;
- ມີຄວາມເຂົ້າໃຈກ່ຽວກັບການສົ່ງເສີມຊີວິດການເປັນຢູ່, ການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ຄວາມສະເໝີພາບຍິງ-ຊາຍ;
- ມີທັກສະຄອມພິວເຕີຂັ້ນພື້ນຖານ ມີຄວາມສາມາດນຳໃຊ້ໂປຣແກຣມ MS Office, ທັກສະການເປັນຜູ້ນຳ ແລະ ມະນຸດສາພັນດີ ເຊັ່ນ: ມີລະບົບການຈັດການ, ການວາງແຜນ, ເວລາ ແລະ ທັກສະໃນການຈັດການສ່ວນບຸກຄົນ.

ຜູ້ທີ່ມີຄວາມສົນໃຈສາມາດປະກອບເອກະສານເຊັ່ນ: ໜັງສືສະໝັກງານ, ປະຫວັດຫຍໍ້, ໃບປະກາດ ແລະ ເອກະສານອື່ນໆ (ຖ້າມີ) ທີ່ສະແດງເຖິງຄຸນນະວຸດທິທີ່ຕ້ອງການ ແລະ ປະສົບການທີ່ກ່ຽວຂ້ອງ ແລ້ວສົ່ງມາທີ່ຫ້ອງການປະສານງານໂຄງການຂັ້ນສູນກາງທີ່ອີເມວ: pmu.brrrp@gmail.com **ກຳນົດບໍ່ໃຫ້ກາຍວັນທີ 17 ກັນຍາ 2026.** ພວກເຮົາຈະຕິດຕໍ່ຫາຜູ້ທີ່ຜ່ານເຂົ້າຮອບຄັດເລືອກເທົ່ານັ້ນ. ສຳລັບຂໍ້ມູນເພີ່ມເຕີມສາມາດພົວພັນໄດ້ຕາມອີເມວຂ້າງເທິງ ຫຼື ທີ່ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄຸ້ມຫ້ອງວ່າການສຳນັກງານນາຍົກ, ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.

ຮອງຫົວໜ້າກົມ

ອາໄພສັກ ແພງທິມມະວົງ